Quizizz

NAME :

[Economic Disputes Resolution in Lao PDR] Week 16-Examination

CLASS :

15 Questions

DATE :

1. ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສປປ ລາວ ທີ່ມີຜົນສັກສິດໃນປັດຈຸບັນແມ່ນກົດໝາຍສະບັບເລກທີເທົ່າໃດ? ລົງວັນທີເດືອນປີໃດ?

A ເລກທີ 52/ສພຊ, ລົງວັນທີ 22/6/2018

B ເລກທີ 51/ສພຊ, ລົງວັນທີ 22/6/2018

C ເລກທີ 51/ສພຊ, ລົງວັນທີ 22/7/2018

2. ການໄກ່ເກ່ຍ ແມ່ນຫຍັງ?

A ການໄກ່ເກ່ຍ ແມ່ນການແກ້ໄຂຂໍ້ຂັດແຍ່ງຂອງຄູ່ກໍລະນີ ດ້ວຍການຕັດສິນ

B ການໄກ່ເກ່ຍ ແມ່ນການແກ້ໄຂຂໍ້ຂັດແຍ່ງຂອງຄູ່ກໍລະນີ ດ້ວຍການປຶກສາຫາລື,ປະນີປະນອມ ແລະ ເຈລະຈາ

C ການໄກ່ເກ່ຍ ແມ່ນການແກ້ໄຂຂໍ້ຂັດແຍ່ງຂອງຄູ່ກໍລະນີ ດ້ວຍການໃຫ້ອະໄພເຊິ່ງກັນ ແລະ ກັນ

3. ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດມີຈັກຮູບການ?

A 3

B 4

C 2

4. ລະບົບອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງ ສປປ ລາວ ມີ ຈັກຂັ້ນ, ຂັ້ນໃດແດ່?

A ຖືກທັງສອງ

B 2 ຂັ້ນຄື: ສູນ ແລະ ຫ້ອງການ

C 3 ຂັ້ນຄື: ສູນ, ຫ້ອງການ, ໜ່ວຍງານ

5. ສະພາການຄ້າສາກົນ International Chamber of Commerce ( ICC) ແມ່ນອົງການ?

A ອົງການທຸລະກິດສາກົນ, ໃຫ້ການຊ່ວຍເຫຼືອໃນການດໍາເນີນທຸລະກິດ ໃຫ້ມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ

B ອົງການແກ້ໄຂຂໍ້ຂັດແຍ່ງສາກົນ

C ຖືກທັງສອງຂໍ້

6. ຈັນຍາບັນຂອງຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ແມ່ນ?

A ຖືກທັງສອງຂໍ້

B ການປະພຶດທີ່ດີ ລວມທັງການປະຕິບັດໜ້າທີ່ວຽກງານຂອງຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ໃນການພິຈາລະນາແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຢ່າງຖືກກົດໝາຍ

C ການປະພຶດທີ່ດີ ລວມທັງການປະຕິບັດໜ້າທີ່ວຽກງານຂອງຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ໃນການພິຈາລະນາແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢ່າງເປັນທຳ, ຖືກຕ້ອງສອດຄ່ອງກັບກົດໝາຍ, ລະບຽບການ ແລະ ຫຼັກການ

7. ຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບດ້ວຍ?

A - ຕາມການຕົກລົງກັນ

B - ຄ່າທຳນຽມ;- ຄ່າບໍລິການ.

C - ຄ່າທຳນຽມ;- ຄ່າບໍລິການ;- ຄ່າແຮງງານ.

8. ຜົນການໄກ່ເກ່ຍທີ່ສາມາດຍອມຮັບໄດ້

A ບໍ່ຂັດກັບຮີດຄອງປະເພນີ

B ຖືກທັງສອງຂໍ້

C ບໍ່ຂັດກັບກົດໝາຍ

9. ລະບົບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດແມ່ນການແກ້ໄຂບັນຫານອກສານ ຫຼື ໃນສານ?

A ນອກ

B ໃນ

C ຖືກທັງສອງຂໍ້

10. ການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດມີຈັກຮູບການ? ຮູບການໃດແດ່?

A 3 ຮູບການ: ປະຕິບັດໂດຍຄູ່ກໍລະນີ, ປະຕິບັດໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ປະຕິບັດໂດຍອົງການປະຕິບັດຄຳຕັດສິນຂອງສານ

B 2 ຮູບການ: ປະຕິບັດໂດຍຄູ່ກໍລະນີ, ປະຕິບັດໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

C ຖືກທັງສອງຂໍ້

11. ຫຼັກຖານໃນຂໍ້ຂັດແຍ່ງທາງດ້ານເສດຖະກິດມີຈັກປະເພດ? ປະເພດໃດແດ່?

A 3 ປະເພດ: ຫຼັກຖານທາງດ້ານວັດຖຸ; ຫຼັກຖານທາງດ້ານເອກະສານ; ຫຼັກຖານທາງດ້ານບຸກຄົນ

B ຖືກທັງສອງຂໍ້

C 2 ປະເພດ: ຫຼັກຖານທາງດ້ານວັດຖຸ; ຫຼັກຖານທາງດ້ານເອກະສານ

12. ຫຼັກຖານທາງດ້ານວັດຖຸ ແມ່ນ ?

A ຖືກທັງສອງຂໍ້

B ທຸກສິ່ງວັດຖຸ

C ພາຫະນະ, ຕຶກອາຄານ, ຮົ້ວ ແລະ ວັດຖຸສິ່ງຂອງອື່ນທີ່ ຕິພັນກັບຂໍ້ຂັດແຍ່ງ

13. ຫຼັກຖານທາງດ້ານເອກະສານ ແມ່ນ ?

A ຖືກທັງສອງຂໍ້

B ບັນດາເອກະສານທັງໝົດ

C ບັນດາເອກະສານທີ່ພົວພັນກັບຂໍ້ຂັດແຍ່ງເຊັ່ນ: ສັນຍາ, ບັນຊີຊັບສິນ, ໃບຮຽກເກັບເງິນ, ຮູບພາບ ແລະ ເອກະສານອື່ນໆ

14. ຫຼັກຖານທາງດ້ານບຸກຄົນ ແມ່ນ ?

A ທຸກຄໍາໃຫ້ການຂອງທຸກຄົນ

B ຖືກທັງສອງຂໍ້

C ຄໍາໃຫ້ການຂອງຄູ່ກໍລະນີ, ຄໍາໃຫ້ການ ແລະ ການຢັ້ງຢືນຂອງພະຍານ ແລະ ຜູ້ເຂົ້າຮ່ວມອື່ນທີ່ພົວພັນກັບຂໍ້ຂັດແຍ່ງ

15. **ການຕີລາຄາຫຼັກຖານຢ່າງພາວະວິໄສ?**

A ໃນການດໍາເນີນການແກ້ໄຂຂໍ້ຂັດແຍ່ງ ຜູ້ໄກ່ເກ່ຍ, ຄະນະກໍາມະການໄກ່ເກ່ຍ ຕ້ອງໄດ້ພິຈາລະນາທຸກຫຼັກຖານທີ່ຝ່າຍຮ້ອງຂໍໄດ້ຮ້ອງຂໍ, ຝ່າຍຖືກຮ້ອງຂໍໄດ້ແກ້ຄໍາຮ້ອງຂໍ ຫຼື ຮ້ອງແຍ່ງ ລວມທັງຫຼັກຖານຂອງບຸກຄົນທີ່ສາມ

B ໃນການດໍາເນີນການແກ້ໄຂຂໍ້ຂັດແຍ່ງ ຜູ້ໄກ່ເກ່ຍ, ຄະນະກໍາມະການໄກ່ເກ່ຍ ຕ້ອງຢູ່ບົນພື້ນຖານຂໍ້ມູນຫຼັກຖານ, ກົດໝາຍ ແລະ ຄວາມຍຸຕິທໍາ

C ໃນການດໍາເນີນການແກ້ໄຂຂໍ້ຂັດແຍ່ງ ຜູ້ໄກ່ເກ່ຍ, ຄະນະກໍາມະການໄກ່ເກ່ຍ ຕ້ອງໄດ້ເກັບກໍາຂໍ້ມູນຫຼັກຖານທັງໝົດທີ່ກ່ຽວຂ້ອງກັບເຫດການຂອງຂໍ້ຂັດແຍ່ງ.

**Answer Key**

| | | | |
|---|---|---|---|
| 1.a | 2.b | 3.c | 4.b |
| 5.a | 6.a | 7.c | 8.b |
| 9.a | 10.a | 11.a | 12.c |
| 13.c | 14.a | 15.b | |